# ແກມຊິວ (GAMCIL)

**ໂຄງການ ສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ**

## ການແຂ່ງຂັນຜະລິດຕະພັນສື່ສີຂຽວປະຈຳປີ ຂອງນັກຂ່າວລາວ

ໃນລະຫວ່າງວັນທີ 18 – 25 ມັງກອນ 2025 ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດການແຂ່ງຂັນຜະລິດຕະພັນສື່ສີຂຽວປະຈຳປີ ຂອງໂຄງການ GAMCIL ຂຶ້ນທີ ນະຄອນຫຼວງວຽງຈັນ ພາຍໃຕ້ 2 ຫົວຂໍ້ **“ການປົກປັກຮັກສາຊີວະນານາພັນ ໂດຍການມີສ່ວນຮ່ວມຂອງບົດບາດແມ່ຍິງ ແລະ ເດັກຍິງ , ການປັບຕົວຕໍ່ກັບການປ່ຽນແປງດິນຟ້າອາກາດ ໂດຍການມີສ່ວນຮ່ວມຂອງ ແມ່ຍິງ ແລະ ເດັກຍິງ”** ເຊິ່ງມີນັກຂ່າວເຂົ້າຮ່ວມໂຄງການທັງ 3 ພາກ ທີ່ໄດ້ສົ່ງບົດເຂົ້າປະກວດທັງໝົດ 36 ບົດ, ແຍກປະເພດວິດີໂອສັ້ນ 4 ບົດ ແລະ ບົດຂຽນ 32 ບົດ.

ຈຸດປະສົງຂອງການຈັດການແຂ່ງຂັນໃນຄັ້ງນີ້ ກໍ່ແມ່ນເພື່ອ ເປັນການເພີ່ມຄວາມຮູ້ຄວາມສາມາດຂອງຜູ້ເຂົ້າຮ່ວມ ໃນການສົ່ງບົດຂ່າວກ່ຽວກັບການພັດທະນາສີຂຽວທີ່ມີຄຸນນະພາບ ເຂົ້າຮ່ວມການແຂ່ງຂັນ, ເພື່ອໃຫ້ໄດ້ບົດຂ່າວຢ່າງໜ້ອຍ 10 ບົດທີ່ໄດ້ຮັບການຄັດເລືອກ ແລະ ເຜີຍແຜ່ໃຫ້ສັງຄົມໄດ້ຮັບຮູ້ຫຼາຍຂຶ້ນກ່ຽວກັບການພັດທະນາສີຂຽວຜ່ານຮູບແບບໜັງສືພິມ, ວາລະສານ, ເວັບໄຊ ແລະ ສື່ສັງຄົມອອນລາຍ. ໃນວັນທີ 27 ກຸມພາ 2025 ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ກໍໄດ້ຈັດພິທີ ມອບ-ຮັບ ລາງວັນ ໃຫ້ແກ່ຜູ້ທີ່ຊະນະການປະກວດແຂ່ງຂັນຂຽນຂ່າວປະຈຳປີ ເພື່ອເປັນການຍ້ອງຍໍ ເຖິງຜົນສຳເລັດຂອງນັກຂ່າວທີ່ໄດ້ຮັບລາງວັນຈາກການປະກວດຂຽນຂ່າວກ່ຽວກັບການພັດທະນາສີຂຽວ ພາຍໃຕ້ໂຄງການ GAMCIL.







ການແຂ່ງຂັນຜະລິດຕະພັນສື່ສີຂຽວປະຈຳປີ ຂອງນັກຂ່າວລາວ



## ການແລກປ່ຽນ ແລະ ຝຶກອົບຮົມການປະຕິບັດຕົວຈິງ ໃຫ້ກັບ ນັກຂ່າວລາວ ທີ່ປະເທດໄທ

ໃນວັນລະຫວ່າງ ວັນທີ 10-21 ກຸມພາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ນຳພາ ຕາງໜ້ານັກຂ່າວລາວ ທີ່ຊະນະເລີດຈາກ ການແຂ່ງຂັນຜະລິດຕະພັນສື່ສີຂຽວ ຈຳນວນ 6 ຄົນ ຍິງ 4 ຄົນ ໄປແລກປ່ຽນ ແລະ ຝຶກອົບຮົມປະຕິບັດຕົວຈິງ ຢູ່ທີ່ ບາງກອກ, ປະເທດໄທ. ຈຸດປະສົງກໍແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ເຂົ້າໃຈ ກ່ຽວກັບຄວາມສຳຄັນ ແລະ ການປັບຕົວເຂົ້າກັບຍຸກດິຈິຕອນ ໃນການລາຍງານຂ່າວບັນຫາສີຂຽວ ແລະ ເພື່ອໃຫ້ຜູ້ເຂົ້າຮ່ວມ ໄດ້ຮຽນຮູ້ການລາຍງານຂ່າວຈາກ ນັກຂ່າວລະດັບພາກພື້ນ. ເຊິ່ງ ກິດຈະກຳ ໄດ້ແບ່ງອອກເປັນ 3 ພາກໃຫຍ່ຄື: ການຝຶກອົບຮົມ ໃນຫ້ອງ ເປັນເວລາ 2 ວັນ ເພື່ອວັດລະດັບຄວາມເຂົ້າໃຈເບື້ອງ ຕົ້ນຂອງ ຜູ້ເຂົ້າຮ່ວມຝຶກອົບຮົມ, ແນະນຳເຕັກນິກການຜະລິດ ແລະ ເລືອກຫົວຂໍ້ຂ່າວກ່ຽວກັບສິ່ງແວດລ້ອມ ໃຫ້ແທດເໝາະ ກັບສັງຄົມ, ພາກທີ 2 ຜູ້ເຂົ້າຮ່ວມໄດ້ແບ່ງກຸ່ມ ເພື່ອລົງວຽກ ພາກປະຕິບັດຝຶກວຽກໂຕຈິງ 3 ສື່ ຄື: ສະຖານີວິທະຍຸ-ໂທລະພາບແຫ່ງປະເທດໄທ (NBT), ສະຖານີວິທະຍຸ-ໂທລະພາບແຫ່ງປະເທດໄທ TBS ແລະ ສະຖານີໂທລະພາບ ຊ່ອງ 9 ອສມທ, ແລະ ພາກທີ 3 ແມ່ນໄດ້ລົງໄປທັດສະນະສຶກສາເບິ່ງວຽກຕົວຈິງຢູ່ ບໍລິສັດ CP ALLຈຳກັດມະຫາຊົນ, ບໍລິສັດ SCG ປູນຊີເມນໄທ ຈຳກັດມະຫາຊົນ, ບໍລິສັດ PTT OR, ສະຖາບັນສິ່ງແວດລ້ອມໄທ, ແລະ ' ອົງການບໍລິຫານອາຍແກັສເຮືອນແກ້ວ (TGO) ເພື່ອຮັບຟັງ ກ່ຽວກັບການປະຢັດ ພະລັງງານ, ການນຳໃຊ້ພະລັງທົດແທນທີ່ເປັນມິດກັບ ສິ່ງແວດລ້ອມ, ໃນການຫຼຸດຜ່ອນຄາບອນຕ່ຳ, ຟື້ນຟູປ່າໄມ້,








ຝຶກອົບຮົມການປະຕິບັດຕົວຈິງ ໃຫ້ກັບນັກຂ່າວລາວ ທີ່ປະເທດໄທ

ໃຊ້ນ້ຳມັນທີ່ເປັນມິດກັບສິ່ງແວດລ້ອມ, ການອອກແບບ ອາຄານ ທີ່ໄດ້ມາດຕະຖານອາຄານສີຂຽວ, ການຕັ້ງ ບ່ອນກັກເກັບປະລິມານມົນລະພິດທາງອາກາດ ແລະ ການນຳໃຊ້ພະລັງງານສະອາດ, ພະລັງງານແສງອາທິດ, ພະລັງງານລົມ ພະລັງງານນ້ຳ, ການໃຊ້ລົດໄຟຟ້າເພື່ອ ຫລຸດຜ່ອນລົດນ້ຳມັນ.

ພາຍຫຼັງສຳເລັດການຝຶກອົບຮົມທີປະເທດໄທ, ຜູ້ເຂົ້າ ຮ່ວມແມ່ນມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຄວາມສຳຄັນຂອງການລາຍງານຂ່າວບັນຫາສີຂຽວໃນລະດັບພາກ ພື້ນ, ມີຄວາມຊຳນິຊຳນານຫຼາຍຂຶ້ນໃນການນຳໃຊ້ ເຄື່ອງມືດິຈິຕອນໃນການລາຍງານຂ່າວ, ໄດ້ຮັບການ ຍົກລະດັບການນຳໃຊ້ເຕັກໂນໂລຊີ ຜ່ານການທົດລອງ ນຳໃຊ້ບັນດາອຸປະກອນທີ່ທັນສະໄໝຈາກຫ້ອງຂ່າວ ແລະ ຂຽນຂ່າວທີ່ປະເທດໄທອີກດ້ວຍ.




## ກອງປະຊຸມສຳມະນາເຊິ່ງນຳພາໂດຍນັກຂ່າວພາກພື້ນ

ໃນວັນທີ 25 ກຸມພາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ໄດ້ຈັດກອງປະຊຸມສຳມະນາ ລະດັບພາກພື້ນ ໃນຫົວຂໍ້: "ການລາຍງານຂ່າວບັນຫາສີຂຽວ ໃນຍຸກດິຈິຕອນ" ທີ່ ນະຄອນຫຼວງວຽງຈັນ, ໂດຍການເຊີນ ນັກຂ່າວຈາກ ປະເທດ ສສ ຫວຽດນາມ, ຣາຊະອານາຈັກໄທ ແລະ ວິທະຍາກອນຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ , ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເພື່ອມາຮ່ວມກອງປະຊຸມ ແລະ ເສວະນາ ເພື່ອໃຫ້ຄວາມຮູ້, ແລກປ່ຽນປະສົບການໃຫ້ແກ່ ນັກສື່ມວນຊົນລາວ ແລະ ຍັງໄດ້ເຊີນຕາງໜ້ານັກຂ່າວທີ່ໄດ້ເຂົ້າຮ່ວມໂຄງການເຂົ້າມາຮ່ວມໃນກອງປະຊຸມແບບເຊິ່ງໜ້າ ແລະ ນັກຂ່າວໃນທົ່ວປະເທດ ເຂົ້າຮ່ວມແບບອອນລາຍ ເຊິ່ງມີຜູ້ເຂົ້າຮ່ວມແບບເຊິ່ງໜ້າທັງໝົດ 74 ທ່ານ, ຍິງ 35 ທ່ານ ແລະ ເຂົ້າຮ່ວມຜ່ານທາງອອນລາຍ ຈຳນວນ 125 ທ່ານ, ຍິງ 83 ທ່ານ. ຈຸດປະສົງໃນການຈັດກອງປະຊຸມສຳມະນາໃນຄັ້ງນີ້ ກໍແມ່ນ ເພື່ອແລກປ່ຽນບົດຮຽນກັບບັນດານັກຂ່າວພາກພື້ນ ກ່ຽວກັບ ການລາຍງານຂ່າວບັນຫາສີຂຽວໃນຍຸກດິຈິຕອນ, ເພື່ອໃຫ້ນັກຂ່າວສາມາດປັບຕົວເພື່ອການນຳໃຊ້ດິຈິຕອນແບບໃໝ່ ເຂົ້າມາຊ່ວຍໃນການລາຍງານຂ່າວໃຫ້ມີປະສິດຕິພາບຫຼາຍຂຶ້ນ ແລະ ເພື່ອໃຫ້ນັກຂ່າວ ມີຄວາມເຂົ້າໃຈໃນການຄຸ້ມຄອງສື່ຂອງຕົນເອງຢ່າງມີປະສິດທິພາບ. ພາຍຫຼັງສຳເລັດກອງປະຊຸມລະດັບພາກພື້ນແລ້ວ ນັກຂ່າວແມ່ນໄດ້ມີຄວາມເຂົ້າໃຈໃນການຜະລິດຂ່າວສີຂຽວຫຼາຍຂຶ້ນ, ມີຄວາມເຂົ້າໃຈກ່ຽວກັບສິ່ງແວດລ້ອມ ແລະ ສາມາດລາຍງານຂ່າວທີ່ຕິດພັນກັບວຽກງານສິ່ງແວດລ້ອມໄດ້ດີຂຶ້ນ ແລະ ຍັງສາມາດນຳໃຊ້ເຄື່ອງມືດິຈິຕອນເຂົ້າໃນການຜະລິດຂ່າວແບບໃໝ່ກ່ຽວກັບການພັດທະນາສີຂຽວ.









ກອງປະຊຸມ ສຳມະນາ ເຊິ່ງນຳພາໂດຍນັກຂ່າວພາກພື້ນ



## ກອງປະຊຸມສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໂຄງການ GAMCIL ປະຈຳປີ 2024 ແລະ ທິດທາງແຜນການປີ 2025

ໃນວັນທີ 27 ກຸມພາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດ **ກອງປະຊຸມສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໂຄງການ GAMCIL ປະຈຳປີ 2024 ແລະ ທິດທາງແຜນການປີ 2025** ທີ່ ນະຄອນຫຼວງວຽງຈັນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 47 ຄົນ, ແມ່ຍິງ 15 ຄົນ. ພາຍໃນກອງປະຊຸມແມ່ນໄດ້ມີການສະຫຼຸບ ແລະ ລາຍງານຜົນສຳເລັດ ຂອງການຈັດຕັ້ງປະຕິບັດໂຄງການ ໃຫ້ເຂດເປົ້າໝາຍຢູ່ ແຂວງ ຫຼວງພະບາງ, ນະຄອນຫຼວງວຽງຈັນ ແລະ ແຂວງ ຈຳປາສັກ ໃນໄລຍະປີ 2024, ໄດ້ມີການ ປຶກສາ ຫາລື ກ່ຽວ ກັບ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດກິດຈະກຳໃນແຕ່ລະພື້ນທີ່ເປົ້າໝາຍຂອງໂຄງການ, ປຶກສາຫາລື ແລະ ໃຫ້ຄວາມເຫັນຮ່ວມກັນໃນການວາງແຜນກິດຈະກຳປະຈຳປີ 2025. ນອກຈາກນັ້ນ ຍັງໄດ້ມີການ ມອບ-ຮັບລາງວັນໃຫ້ແກ່ນັກຂ່າວ ທີ່ຊະນະການປະກວດແຂ່ງຂັນຂຽນຂ່າວ ຈຳນວນ 10 ຄົນ ພ້ອມທັງຮັບຊົມວິດີໂອຜົນສຳເລັດຂອງການເຮັດກິດຈະກຳຂອງໂຄງການ ແລະ ວິດີໂອການໄປຝຶກອົບຮົມທີ່ປະເທດໄທ. ຫຼັງຈາກທີ່ສຳເລັດກອງປະຊຸມ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ລາວ ກໍໄດ້ເຮັດບົດສະຫລຸບລາຍງານ ການຈັດຕັ້ງປະຕິບັດກິດຈະກຳ ແລະ ແຜນການດຳເນີນປະຕິບັດໃນປີ 2025 ເພື່ອລາຍງານການເຄື່ອນໄຫວໃຫ້ກັບ ກະຊວງການຕ່າງປະເທດ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຄະນະຊີ້ນຳໂຄງການ. ເພື່ອໃຫ້ໂຄງການສາມາດຈັດຕັ້ງປະຕິບັດໄດ້ຕາມແຜນກິດຈະກຳທີ່ວາງໄວ້ຢ່າງຖືກຕ້ອງ ແລະ ທັນກັບເວລາທີ່ກຳນົດ.








ກອງປະຊຸມສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໂຄງການ GAMCIL



## ກອງປະຊຸມຜູ້ປະສານງານໂຄງການຂັ້ນແຂວງ

ໃນວັນທີ 27 ກຸມພາ 2025, ສະມາຄົມນັກຂ່າວ ແຫ່ງ ສປປ ລາວ ແລະ ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ຈັດກອງປະຊຸມຜູ້ປະສານງານ ໂຄງການ GAMCIL ຂຶ້ນ ທີ່ ນະຄອນຫຼວງວຽງຈັນ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 15 ຄົນ. ພາຍໃນ ກອງປະຊຸມ ຜູ້ເຂົ້າຮ່ວມ ແມ່ນໄດ້ມີການຖອດຖອນ ບົດຮຽນກ່ຽວກັບ ວຽກປະສານງານ, ລາຍງານ ຜົນສຳເລັດ ແລະ ສິ່ງທ້າທາຍ ຂອງການຈັດຕັ້ງ ປະຕິບັດໂຄງການໃນເຂດເປົ້າໝາຍ ຢູ່ ແຂວງ ຫຼວງພະບາງ, ນະຄອນຫຼວງວຽງຈັນ ແລະ ແຂວງ ຈຳປາສັກ ໃນໄລຍະທີ່ຜ່ານມາ. ນອກຈາກນັ້ນ ຍັງໄດ້ມີການປຶກສາຫາລື ແລະ ຮ່ວມກັນວາງແຜນການ ດຳເນີນກິດຈະກຳໃນປີຕໍ່ໄປ ໂດຍສະເພາະແມ່ນ ຂອດການປະສານງານ, ການພົວພັນກັບຜູ້ເຂົ້າຮ່ວມ ໂຄງການ ແລະ ການລົງຝຶກອົບຮົມໃນພື້ນທີ່ເປົ້າໝາຍຂອງໂຄງການ ໃຫ້ສາມາດດຳເນີນໄດ້ຢ່າງມີ ປະສິດທິພາບຫຼາຍຂຶ້ນກວ່າເກົ່າ.





ກອງປະຊຸມຜູ້ປະສານງານ ໂຄງການ GAMCIL

ການໄປຝຶກອົບຮົມຢູ່ໄທເຮັດໃຫ້ຂ້າພະເຈົ້າ ໄດ້ຮຽນຮູ້ ແລະ ພັດທະນາຕົນເອງຫຼາຍ ເປັນຕົ້ນແມ່ນໄດ້ສຶກສາຮຽນຮູ້ການຄົ້ນຫາຂໍ້ມູນຂ່າວ, ການຈັບປະເດັນຂ່າວທີ່ຢາກຈະຂຽນ ແລະ ການວາງແຜນການຂຽນຂ່າວ, ມູມມອງຂອງນັກຂ່າວສິ່ງແວດລ້ອມຕໍ່ການຜະລິດຂ່າວ, ຄວາມທ້າທາຍ ແລະ ຂໍ້ສະດວກຂອງການເຮັດຂ່າວສິ່ງແວດລ້ອມ.

ບົດຮຽນດັ່ງກ່າວຈະສາມາດນຳເອົາມາປັບໃຊ້ເຂົ້າໃນວຽກງານທີ່ຂ້າພະເຈົ້າກຳລັງເຮັດຢູ່ ແລະ ຂ້າພະເຈົ້າໝັ້ນໃຈວ່າໃນຕໍ່ໜ້າຜູ້ຄົນຈະຍິ່ງໃຫ້ຄວາມສົນໃຈຕໍ່ກັບສິ່ງແວດລ້ອມຫຼາຍຂຶ້ນ ເຊິ່ງກໍໝາຍຄວາມວ່າ ຂ່າວທີ່ກ່ຽວກັບສິ່ງແວດລ້ອມຈະຕ້ອງເປັນຂ່າວທີ່ມີຄວາມລະອຽດ, ມີຄວາມຖືກຕ້ອງ, ຂຽນໄດ້ຖືກກັບສະຖານະການປັດຈຸບັນ ແລະ ສາມາດເຜີຍແຜ່ຂໍ້ມູນໃຫ້ກັບຜູ້ບໍລິໂພກໄດ້ຢ່າງກວ້າງຂວາງ.



**ທ່ານ ນາງ ພະລາວັນ ເພັງສະຫວັດ,**
ວິຊາການນັກຂ່າວ, ພະແນກຖະແຫຼງຂ່າວ,
ວັດທະນະທຳ ແລະ ທ່ອງທ່ຽວ ແຂວງຈຳປາສັກ.



**ທ່ານ ແສງແກ້ວປະເສີດກຸນ ນັກຂ່າວຈາກສະຖານີ**
ວິທະຍຸ -ໂທລະພາບ ສະຖານີວິທະຍຸ -ໂທລະພາບ
ແຂວງ ຫລວງພະບາງ.

ໂຄງການ GAMCIL ເປັນໂຄງການທີ່ດີຫຼາຍ ຂ້າພະເຈົ້າໄດ້ຮັບໂອກາດໃນການຮຽນຮູ້ບົດຮຽນ ແລະ ປະສົບການໃໝ່ໆທີ່ບໍ່ເຄີຍມີມາກ່ອນ. ຂ້າພະເຈົ້າໄດ້ພັດທະນາຕົນເອງ ຈາກທີ່ບໍ່ທັນຮັບຮູ້ເຂົ້າໃຈຕໍ່ວຽກງານສື່ສິຂຽວ ແລະ ສິ່ງແວດລ້ອມ ກໍ່ໄດ້ຮຽນຮູ້ ແລະ ເຂົ້າໃຈໂດຍສະເພາະການຄົ້ນຄິດຊອກຫົວຂໍ້ປະເດັນຂ່າວທີ່ໜ້າສົນໃຈ ຕໍ່ກັບບັນຫາສິ່ງແວດລ້ອມ, ການນຳສະເໜີຂ່າວດ້ວຍຫຼາກຫຼາຍຮູບແບບ ໂດຍການນຳໃຊ້ສື່ແບບໃໝ່ເຂົ້າໃນການລາຍງານຂ່າວສີຂຽວ ແລະ ທັນເຫດການຫຼາຍຂຶ້ນ. ຂ້າພະເຈົ້າເຊື່ອວ່າ ໂຄງການ GAMCIL ຈະເປັນອີກໂຄງການໜຶ່ງ ທີ່ຈະຊ່ວຍສົ່ງເສີມວຽກງານສື່ມວນຊົນ ກໍຄືນັກຂ່າວລາວ ໃຫ້ມີຄວາມຮູ້ຄວາມສາມາດຫຼາຍຂຶ້ນກວ່າເກົ່າແນ່ນອນ.



**ທ່ານ ນາງ ທິດລານີທິດລານີ ໂຄດໂຍທາ ນັກຂ່າວໜັງສືພິມ ແຂວງສາລະວັນ**

ການນຳໃຊ້ສື່ເຂົ້າມາຊ່ວຍສົ່ງເສີມການພັດທະນາສີຂຽວ ແມ່ນມີຄວາມສຳຄັນຫຼາຍ ເນື່ອງຈາກວ່າ ຜູ້ຄົນຍັງບໍ່ທັນໄດ້ຮັບຂໍ້ມູນກ່ຽວກັບສິ່ງແວດລ້ອມເທົ່າທີ່ຄວນ ເຮັດໃຫ້ເກີດມີການທຳລາຍສິ່ງແວດລ້ອມຂຶ້ນຢ່າງຕໍ່ເນື່ອງ ແລະ ສົ່ງຜົນກະທົບໃນຫຼາຍໆດ້ານ. ດັ່ງນັ້ນການເຜີຍແຜ່ຂໍ້ມູນຂ່າວສານຜ່ານສື່ໂທລະພາບ, ວິທະຍຸ, ໜັງສືພິມ ແລະ ສື່ແບບໃໝ່ ກ່ຽວກັບການພັດທະນາສີຂຽວ ໃຫ້ສັງຄົມໄດ້ຮັບຮູ້ ຈຶ່ງເປັນສິ່ງທີ່ຈຳເປັນຫຼາຍ ທີ່ຈະຊ່ວຍເຮັດໃຫ້ເຂົາເຈົ້າມີຄວາມເຂົ້າໃຈຫຼາຍຂຶ້ນ. ຂ້າພະເຈົ້າ ກໍຈະນຳເອົາບົດຮຽນທີ່ໄດ້ຮຽນມາຈາກໂຄງການ GAMCIL ປັບໃຊ້ເຂົ້າໃນວຽກງານຕົວຈິງ ໂດຍສະເພາະໃນການລົງເກັບຂ່າວ, ການຂຽນຂ່າວບັນຫາສິ່ງແວດລ້ອມໃຫ້ຫຼາຍຂຶ້ນ ເພື່ອທີ່ຈະໄດ້ເຜີຍແຜ່ວຽກງານດັ່ງກ່າວໃຫ້ສັງຄົມຮັບຮູ້ກ່ຽວກັບບັນຫາສິ່ງແວດລ້ອມໃຫ້ຫຼາຍຂຶ້ນ ແລະ ເອົາໃຈໃສ່ໃນການແກ້ໄຂບັນຫາຮ່ວມກັນ.



info@laja.la | LAO.Info@care.org
@LaoJournalistsAssociation | @careinlaos
@Laja24 | @careinlaos
www.laja.la | www.careint.org.la
CARE International in Lao PDR

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

ໃຫ້ທຶນໂດຍ ສະຫະພາບ ເອີຣົບ

Lao Journalists Association

# ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ



ການວາງແຜນຮ່ວມກັນໃນການປັບຕົວຕໍ່ກັບການປ່ຽນແປງສະພາບດິນຟ້າອາກາດ.

## ແຜນທີ

ທີ່ຕັ້ງໂຄງການ
ນະຄອນຫຼວງວຽງຈັນ

ພື້ນທີເປົ້າໝາຍ
ຫຼວງພະບາງ, ຈຳປາສັກ



ໄລຍະເວລາ
ມີນາ 2023 - ກຸມພາ 2027

ຜູ້ໄດ້ຮັບຜົນປະໂຫຍດ
ທາງກົງ ຜູ້ຊາຍ ແລະ ແມ່ຍິງ 6,155 ຄົນ
ທາງອ້ອມ ຜູ້ຊາຍ ແລະ ແມ່ຍິງ 10,000 ຄົນ

ຄູ່ຮ່ວມງານ
ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກົມສື່ມວນຊົນ ແລະ ສະມາຄົມນັກຂ່າວ ແຫ່ງ ສປປ ລາວ

## ຄວາມເປັນມາຂອງ ໂຄງການ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ ແມ່ນໂຄງການໜຶ່ງທີ່ໄດ້ເຮັດວຽກກັບບັນດາສື່ມວນຊົນຂອງລັດ ແລະ ເອກະຊົນ ເພື່ອປັບປຸງທັກສະວິຊາຊີບຂອງນັກຂ່າວລາວ ໂດຍການເພີ່ມຄວາມຮູ້ທາງດ້ານສື່ດິຈິຕອລ ແລະ ຄວາມເຂົ້າໃຈກ່ຽວກັບສື່ແບບໃໝ່. ໂຄງການ ໄດ້ຮັບການສະໜັບສະໜູນຈາກ ໂຄງການ ພັດທະນາສີຂຽວຂອງສະຫະພາບ ເອີຣົບ ທີ່ໃຫ້ການສະໜັບສະໜູນນະໂຍບາຍໃນຂົງເຂດດ້ານການປັບຕົວ ແລະ ການຫຼຸດຜ່ອນຄວາມສ່ຽງຕໍ່ກັບດິນຟ້າອາກາດ, ການພັດທະນາເສດຖະກິດ-ສັງຄົມ ແບບຍືນຍົງ.

ໂຄງການ ຍັງໄດ້ເສີມຂະຫຍາຍການຮັບຮູ້ທາງດ້ານ ສື່ດິຈິຕອລ ແລະ ການພັດທະນາສີຂຽວ ເພື່ອເພີ່ມການເຂົ້າເຖິງຂໍ້ມູນຂ່າວສານ ການພັດທະນາທີ່ກ່ຽວຂ້ອງກັບບົດບາດທາງເພດ, ສິດທິຂອງຜູ້ອອກແຮງງານ ແລະ ການພັດທະນາຊຸມຊົນໃນ ສປປ ລາວ ທີ່ຕິດພັນກັບການພັດທະນາສີຂຽວແບບຍືນຍົງ. ໂຄງການຍັງຈະເສີມສ້າງການມີສ່ວນຮ່ວມ, ທັດສະນະຄະຕິ, ວິໄສທັດ ແລະ ຄວາມສາມາດຂອງນັກຂ່າວ ດ້ວຍການສຸມໃສ່ການນຳໃຊ້ສື່ຢ່າງເຂັ້ມແຂງ ເພື່ອສົ່ງເສີມການເຕີບໂຕສີຂຽວຂອງປະຊາຊົນ ໃນ ສປປ ລາວ.

ຜ່ານການຝຶກອົບຮົມ, ການປະຊຸມ, ການແຂ່ງຂັນ ແລະ ການເຮັດກິດຈະກຳຕ່າງໆ, ອົງການຈັດຕັ້ງທາງສັງຄົມລາວ, ນັກຂ່າວລາວ, ນັກສ້າງຮູບເງົາ, ຢູທູບເບີ້ ຈະໄດ້ຮັບການເສີມຂະຫຍາຍຄວາມຮູ້ຄວາມສາມາດ, ໃຫ້ພວກເຂົາໄດ້ມີສ່ວນຮ່ວມຢ່າງສ້າງສັນເຂົ້າໃນການວາງນະໂຍບາຍ, ຕິດຕາມ ແລະ ຊຸກຍູ້ ໂດຍຜ່ານການລາຍງານທີ່ມີຄວາມຮັບຜິດຊອບ ແລະ ເປັນມືອາຊີບ ກ່ຽວກັບການພັດທະນາສີຂຽວ.

## ຈຸດປະສົງຂອງ ໂຄງການ

ເພື່ອແກ້ໄຂຊ່ອງວ່າງທາງດ້ານຄວາມຮູ້ທາງສື່ສັງຄົມ, ປັບປຸງການຮູ້ທາງດ້ານສື່ດິຈິຕອລ ແລະ ຫຼຸດຜ່ອນຄວາມສ່ຽງຂອງ “ຂ່າວປອມ” ໂດຍການເສີມສ້າງຂີດຄວາມສາມາດຂອງນັກຂ່າວລາວຢູ່ ນະຄອນຫຼວງວຽງຈັນ, ແຂວງ ຫຼວງພະບາງ ແລະ ແຂວງ ຈຳປາສັກ.

ເພື່ອເພີ່ມທະວີຄວາມຮັບຮູ້ກ່ຽວກັບບັນຫາສີຂຽວ ແລະ ການປ່ຽນແປງດິນຟ້າອາກາດໃນພື້ນທີ່ຊົນນະບົດຂອງ ສປປ ລາວ

## ຜູ້ໃຫ້ທຶນ

ສະຫະພາບ ເອີຣົບ

ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສື່ມວນຊົນ ໂດຍການມີສ່ວນຮ່ວມຂອງອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງທາງສັງຄົມ ເພື່ອການພັດທະນາສີຂຽວ ໃນ ສປປ ລາວ
2023